ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 07 /ທຫລ 2011

ນະຄອນຫຼວງວຽງຈັນ, ວັນທີ 07 JAN [illegible]

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບສະຫວັດດີການສັງຄົມ ຕໍ່ພະນັກງານທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມດຳລັດ ວ່າດ້ວຍລະບຽບລັດຖະກອນແຫ່ງ ສປປ ລາວ ສະບັບເລກທີ 82/ນຍ ລົງວັນທີ 19 ພຶດສະພາ 2003;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍລະບອບປະກັນສັງຄົມແຫ່ງລັດ ສະບັບເລກທີ 70/ນຍ ລົງວັນທີ [illegible] 2006 ແລະ ຄຳສັ່ງແນະນຳ ກ່ຽວກັບການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ສະບັບເລກທີ 2839/ຮສສ ລົງວັນທີ 08/08/2008;
- ອີງຕາມການເຫັນດີເປັນເອກະພາບຂອງຄະນະພັກ ທຫລ ຄັ້ງວັນທີ 20/08/2010.

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ :

### ໝວດທີ I

### ຫຼັກການລວມ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອເປັນບ່ອນອີງໃນການປະຕິບັດນະໂຍບາຍສະຫວັດດີການສັງຄົມໃຫ້ພະນັກງານ ແລະຄອບຄົວຂອງພະນັກງານທະນາຄານແຫ່ງ ສປປ ລາວ ໃນເວລາປະຈຳການ, ຮັບບຳນານ ແລະເສຍຊີວິດ.



ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະສັບ : 4304 BNL [illegible]

**ມາດຕາ 2.** **ເປົ້າໝາຍຜູ້ທີ່ຈະໄດ້ຮັບນະໂຍບາຍ**

1. ພະນັກງານລົ້ມບູນ ແລະຝຶກງານທີ່ໄດ້ເສຍເງິນເຂົ້າຄັງສະຫວັດດີການສັງຄົມ ຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະເດືອນ 8% ຂອງເງິນເດືອນພື້ນຖານແຕ່ລະຄົນບວກກັບເງິນອຸດໜູນປີການ, ອຸດໜູນຕຳແໜ່ງ, ອຸດໜູນທາດເບື່ອ, ອຸດໜູນແຮງງານເຮັດວຽກເພີ້ມ ແລະວຽກໜັກ;
2. ພະນັກງານບຳນານ, ຜູ້ເສຍອົງຄະ, ຜູ້ຮັບອຸດໜູນໝ້າຍ, ອຸດໜູນລູກກຳພ້າ, ອຸດໜູນລ້ຽງດູພໍ່ ແລະແມ່, ພໍ່ ຫຼື ແມ່ ໃນແຕ່ລະເດືອນໄດ້ເສຍເງິນເຂົ້າຄັງສະຫວັດດີການສັງຄົມຂອງທະນາຄານແຫ່ງ ສປປ ລາວ 2% ຂອງເງິນອຸດໜູນແຕ່ລະປະເພດ;
3. ຜົວ ຫຼື ເມຍ, ລູກ, ພໍ່-ແມ່ຂອງພະນັກງານ ແລະພໍ່-ແມ່ ຂອງຜົວ ຫຼື ເມຍ ພະນັກງານ.

## ໝວດທີ II
## ການອຸດໜູນປິ່ນປົວສຸຂະພາບ

**ມາດຕາ 3.** **ວົງເງິນປິ່ນປົວພະຍາດ**

ແຕ່ລະປີພະນັກງານທະນາຄານແຫ່ງ ສປປ ລາວ ມີວົງເງິນຄ່າບຳລຸງຮັກສາສຸຂະພາບ ແລະຄ່າປິ່ນປົວພະຍາດ ລວມທັງໝົດ 10 ເທົ່າ ຂອງເງິນເດືອນພື້ນຖານຕາມຂັ້ນ-ຂັ້ນເງິນເດືອນຂອງໃຜລາວ.

**ມາດຕາ 4.** **ອຸດໜູນດູແລສຸຂະພາບ**

ທະນາຄານແຫ່ງ ສປປ ລາວ ປະຕິບັດນະໂຍບາຍອຸດໜູນບຳລຸງຮັກສາສຸຂະພາບ ໃຫ້ພະນັກງານເດືອນລະ 500.000 ກີບ/ຄົນ. ນອກນີ້ພະນັກງານຍັງໄດ້ຮັບນະໂຍບາຍປິ່ນປົວສຸຂະພາບຕື່ມ ດັ່ງນີ້:

4.1. ພະນັກງານເຈັບເປັນ ຕ້ອງໄດ້ນອນປິ່ນປົວພະຍາດຢູ່ໂຮງໝໍລັດ ແມ່ນຈະໄດ້ຮັບການທົດແທນຄ່າປິ່ນປົວຄືນຕາມການສະເໜີ ແຕ່ສູງສຸດບໍ່ເກີນວົງເງິນທີ່ຍັງເຫຼືອ ຂອງໃຜລາວໃນປີນັ້ນ.

- ສຳລັບການຊື້ຢາເພື່ອປິ່ນປົວ ຖ້າຫາກຢູ່ໂຮງໝໍລັດບໍ່ມີຢາຊະນິດທີ່ແພດສັ່ງ ຈຶ່ງສາມາດໄປຊື້ຢາຢູ່ຮ້ານຂອງເອກະຊົນໄດ້.

4.2. ໃນກໍລະນີພະນັກງານເຈັບເປັນ ຕ້ອງໄດ້ໄປປິ່ນປົວຢູ່ຕ່າງປະເທດ ສະເພາະ: ຈີນ, ຫວຽດນາມ, ໄທ, ກຳປູເຈຍ ຕ້ອງມີໃບນຳສົ່ງຈາກໂຮງໝໍຂອງລັດ ແລະໄດ້ຮັບການອະນຸຍາດຈາກການຈັດຕັ້ງ (ບໍ່ເກີນ 03 ຄັ້ງ/ປີ) ແມ່ນຈະໄດ້ຮັບການທົດແທນຄືນຄ່າປິ່ນປົວ 60% ແຕ່ສູງສຸດບໍ່ເກີນວົງເງິນທີ່ຍັງເຫຼືອ ຂອງໃຜລາວໃນປີນັ້ນ. ສຳລັບຄ່າເດີນທາງ (ໄປ-ກັບ) ແມ່ນຈະໄດ້ຮັບການທົດແທນຄືນ 50%/ຄັ້ງ.

4.3 ສຳລັບພະນັກງານທີ່ເຈັບເປັນຍ້ອນເກີດຈາກວິຊາຊີບ, ອຸປະຕິເຫດແຮງງານໃນເວລາປະຕິບັດໜ້າທີ່ວຽກງານຕາມການຈັດຕັ້ງມອບໝາຍ ຫຼືໃນເວລາໄປການມາການແຕ່ລະວັນແມ່ນຈະໄດ້ຮັບການທົດແທນຄ່າປິ່ນປົວຄືນ 100% ຕາມການປິ່ນປົວຕົວຈິງ. ແຕ່ຖ້າຄ່າປິ່ນປົວດັ່ງກ່າວຕົກເປັນພາລະຂອງຄູ່ກໍລະນີ ແມ່ນຈະບໍ່ໄດ້ຮັບຄ່າປິ່ນປົວດັ່ງກ່າວອີກ.

4.4. ການທົດແທນຄ່າຊື້ແວ່ນຕາເພື່ອອ່ານໜັງສື ( ບວກ ຫຼື ລົບ 0,5% ຂຶ້ນໄປ ) ແມ່ນແກ້ໄຂໃຫ້ພະນັກງານສົມບູນຂອງ ທະນາຄານແຫ່ງ ສປປ ລາວ 2 ປີໃດມີສິດຊື້ໄດ້ 1 ອັນ ໃນວົງເງິນສູງສຸດບໍ່ເກີນ 500.000 ກີບ ແລະຕ້ອງໄດ້ຮັບການວັດແທກສາຍຕາຢູ່ໂຮງໝໍ ຫຼື ຮ້ານຕັດແວ່ນຕາຂອງລັດ ຈຶ່ງຈະທົດແທນເງິນຄືນ.

**<u>ມາດຕາ 5.</u> ການປະກອບເອກະສານຢັ້ງຢືນການປິ່ນປົວ**

ພະນັກງານຫາກເຈັບເປັນ ຕ້ອງໄດ້ນອນປິ່ນປົວຢູ່ໂຮງໝໍ ກ່ອນຈະສະເໜີຂໍການທົດແທນຄືນ ຕ້ອງປະກອບເອກະສານດັ່ງນີ້:

1. ໃບສະເໜີຂໍທົດແທນຄ່າປິ່ນປົວ ໂດຍມີການຢັ້ງຢືນຈາກຄະນະກົມກ່ຽວຂ້ອງ;
2. ໃບປິ່ນມະຕິພະຍາດ, ໃບສັ່ງກວດ,ໃບສັ່ງຢາ ແລະໃບບິນເກັບເງິນຕ່າງໆກ່ຽວກັບການປິ່ນປົວ;
3. ໃບຢັ້ງຢືນການອອກໂຮງໝໍ.

ສຳລັບໃບບິນເກັບເງິນຕ່າງໆນັ້ນ ມີກຳນົດບໍ່ເກີນ 90 ວັນ.

**<u>ມາດຕາ 6.</u> ກວດສຸຂະພາບປະຈຳປີ**

ທະນາຄານແຫ່ງ ສປປ ລາວ ປະຕິບັດນະໂຍບາຍຄ່າກວດສຸຂະພາບປະຈຳປີ 01 ຄັ້ງ/ປີ ໃຫ້ພະນັກງານທີ່ເຮັດວຽກນຳທາດເບື່ອ, ອະນາໄມ ແລະເປັນຄູສອນປະຈຳ ຊຶ່ງໄດ້ໄປກວດສຸຂະພາບປະຈຳປີຢູ່ໂຮງໝໍສູນກາງ ແລະແຂວງ ຕາມຈຳນວນເງິນທີ່ກວດຕົວຈິງ.

ປະຕິບັດນະໂຍບາຍກວດສຸຂະພາບປະຈຳປີໃຫ້ພະນັກງານ ຜູ້ທີ່ມີອາຍຸສະເລ່ຍ 50 ປີຂຶ້ນໄປ 01 ຄັ້ງ/ປີ ຕາມຈຳນວນເງິນທີ່ກວດຕົວຈິງ.

**<u>ມາດຕາ 7.</u> ການລົງຢ້ຽມຢາມພະນັກງານ.**

ທະນາຄານແຫ່ງ ສປປ ລາວ ອຸດໜູນເງິນຊື້ຂອງຕ້ອນ ໃນການລົງຢ້ຽມຢາມພະນັກງານ ໃນກໍລະນີ :

- ພະນັກງານເຈັບເປັນປິ່ນປົວຢູ່ເຮືອນ ຫຼື ໂຮງໝໍ (3 ວັນຂຶ້ນໄປ )
- ພະນັກງານບຳນານ.

ໃນການລົງຢ້ຽມຢາມແຕ່ລະຄັ້ງ ແມ່ນໃຫ້ກົມທີ່ກ່ຽວຂ້ອງເປັນເຈົ້າການ ສົມທົບກັບບັນດາກົມ ແລະ 3 ອົງການຈັດຕັ້ງມະຫາຊົນ ໂດຍໃຫ້ກົມກ່ຽວຂ້ອງເປັນຜູ້ສະເໜີຂໍເງິນອຸດໜູນດັ່ງກ່າວ ຕາມຕຳແໜ່ງງານດັ່ງນີ້ :

| | | |
|---|---|---|
| 1. | ຄະນະຜູ້ວ່າການ | 300.000 ກີບ/ຄົນ/ຄັ້ງ |
| 2. | ຄະນະກົມ ແລະທຽບເທົ່າ | 200.000 ກີບ/ຄົນ/ຄັ້ງ |
| 3. | ຄະນະພະແນກ | 150.000 ກີບ/ຄົນ/ຄັ້ງ |
| 4. | ວິຊາການ | 100.000 ກີບ/ຄົນ/ຄັ້ງ |

5. ສຳລັບພະນັກງານບຳນານແມ່ນອີງຕາມຕຳແໜ່ງງານສຸດທ້າຍກ່ອນຮັບເບັຍບຳນານ.

ມາດຕາ 8. ການຄິດໄລ່ຄ່າເດີນທາງ.

ພະນັກງານທະນາຄານແຫ່ງ ສປປ ລາວ ທີ່ປະຈຳການຢູ່ ບັນດາສາຂາຂອງ ທຫລ ທີ່ຢູ່ທ້ອງຖິ່ນ ທີ່ມີຄວາມຈຳເປັນຕ້ອງໄດ້ມາກວດ ຫຼື ປິ່ນປົວສຸຂະພາບຢູ່ນະຄອນຫຼວງວຽງຈັນ ຕ້ອງມີໃບຢັ້ງຢືນຈາກແພດກ່ຽວຂ້ອງ ( ຍົກເວັ້ນກໍລະນີສຸກເສີນ ) ຈຶ່ງຈະຄິດໄລ່ຄ່າເດີນທາງໃຫ້. ສ່ວນອັດຕາກິນ, ຄ່າທີ່ພັກ ແລະເງິນແຮບຸກຄົນ ໃຫ້ຜູ້ກ່ຽວຮັບຜິດຊອບເອງ.

ໃນກໍລະນີ ມາເຮັດວຽກ ແລະກວດສຸຂະພາບພ້ອມກັນ ທະນາຄານແຫ່ງ ສປປ ລາວ ຈະບໍ່ຄິດໄລ່ຄ່າເດີນທາງໃຫ້ຕື່ມອີກ.

## ໝວດທີ III

## ການອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ ແລະອຸດໜູນຜູ້ເສຍອົງຄະ

ມາດຕາ 9. ອຸດໜູນອຸປະຕິເຫດແຮງງານ ແລະພະຍາດອາຊີບ.

ພະນັກງານນັບແຕ່ມື້ເຂົ້າເປັນລັດຖະກອນ ຫາກເຈັບເປັນຍ້ອນເກີດຈາກວິຊາຊີບ, ອຸປະຕິເຫດແຮງງານ ໃນເວລາປະຕິບັດໜ້າທີ່ວຽກງານຕາມການຈັດຕັ້ງມອບໝາຍ ມີສິດພັກປິ່ນປົວຕາມຄຳສັ່ງຂອງແພດ. ໃນໄລຍະ 3 ເດືອນທຳອິດຈະໄດ້ຮັບເງິນເດືອນ ແລະເງິນອຸດໜູນຕ່າງໆ ຄືກັບກ່ອນເຈັບ. ຖ້າເກີນ 3 ເດືອນ ຈະຄິດໄລ່ເງິນເດືອນໃຫ້ 60% ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວ ແຕ່ມີໄລຍະບໍ່ເກີນ 6 ເດືອນ. ຖ້າເກີນ 6 ເດືອນ ຈະຕ້ອງມີການກວດກາສຸຂະພາບຄືນໃໝ່ ຖ້າແພດຢັ້ງຢືນວ່າ: ສຸຂະພາບຂອງຜູ້ກ່ຽວຈະດີຂຶ້ນພາຍໃນ 6 ເດືອນ ແມ່ນຈະສືບຕໍ່ໄດ້ຮັບເງິນເດືອນ 60% ແຕ່ບໍ່ເກີນ 6 ເດືອນ; ຖ້າສຸຂະພາບຂອງຜູ້ກ່ຽວບໍ່ດີຂຶ້ນພາຍໃນ 6 ເດືອນ ຂ້າງໜ້າສະພາການແພດຈະປະເມີນການເສຍອົງຄະ ຫຼື ເສຍກຳລັງແຮງງານ.

- ປະເພດການເສຍອົງຄະ ຫຼື ເສຍກຳລັງແຮງງານ :

| ລະດັບການເສຍອົງຄະ | ປະເພດເສຍອົງຄະ | ຮູບການອຸດໜູນ |
|---|---|---|
| 81 - 100% = 100% | I | ເປັນລາຍເດືອນ |
| 71 - 80% = 80% | II | ເປັນລາຍເດືອນ |
| 61 - 70% = 70% | III | ເປັນລາຍເດືອນ |
| 51 - 60% = 60% | IV | ເປັນລາຍເດືອນ |
| 41 - 50% = 50% | V | ເປັນລາຍເດືອນ |
| 31 - 40% = 40% | VI | ອຸດໜູນເທື່ອດຽວ |
| 21 - 30% = 30% | VII | ອຸດໜູນເທື່ອດຽວ |
| > 20% = 20% | VIII | ອຸດໜູນເທື່ອດຽວ |

- <u>ວິທີຄິດໄລ່ເງິນອຸດໜູນ :</u>

ການຄິດໄລ່ເງິນອຸດໜູນເສຍອົງຄະ ຫຼື ເສຍກຳລັງແຮງງານ ມີ 2 ວິທີ ຄື :

1. **ເງິນອຸດໜູນເປັນລາຍເດືອນ** : ແມ່ນໃຫ້ເອົາ 80% ຂອງເງິນເດືອນຜູ້ກ່ຽວເດືອນສຸດທ້າຍ ແລ້ວຄູນເປີເຊັນຂອງການເສຍອົງຄະ;

   ສຳລັບຜູ້ທີ່ບໍ່ສາມາດອອກແຮງງານໄດ້ ຫຼື ໄດ້ຮັບແຕ່ເງິນອຸດໜູນເສຍອົງຄະນັ້ນ, ຫາກເງິນອຸດໜູນໜ້ອຍກວ່າເງິນເດືອນພື້ນຖານ ຊັ້ນ 1/5 ຂອງເງິນເດືອນພື້ນຖານ ທຫລ ແມ່ນໃຫ້ເອົາເງິນເດືອນພື້ນຖານ ຊັ້ນ 1/5 ຂອງເງິນເດືອນພື້ນຖານ ທຫລ ເລີຍ.
2. **ເງິນອຸດໜູນເທື່ອດຽວ** : ແມ່ນໃຫ້ເອົາເປີເຊັນຂອງການເສຍອົງຄະ ຄູນໃຫ້ເງິນເດືອນຜູ້ກ່ຽວເດືອນສຸດທ້າຍ ຄູນໃຫ້ 12 ເດືອນ.

<u>ມາດຕາ 10.</u> ອຸດໜູນຜູ້ເສຍອົງຄະ

ພະນັກງານທີ່ເສຍເງິນເຂົ້າຄັງສະຫວັດດີການສັງຄົມຂອງ ທຫລ ຄົບ 5 ປີ ຂຶ້ນໄປ ເມື່ອເຈັບເປັນຍ້ອນພະຍາດຂອງຕົນເອງ ຫຼື ໃນກໍລະນີທີ່ເກີດອຸປະຕິເຫດ ຊຶ່ງບໍ່ເນື່ອງມາຈາກການປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍ ຈົນບໍ່ສາມາດອອກແຮງງານໄດ້ ໂດຍມີການຢັ້ງຢືນຈາກສະພາການແພດ ມີສິດພັກປິ່ນປົວຕາມຄຳສັ່ງຂອງແພດ. ໃນໄລຍະ 3 ເດືອນທຳອິດ ຈະໄດ້ຮັບເງິນເດືອນ ແລະເງິນອຸດໜູນຕ່າງໆຄືກັບກ່ອນເຈັບ. ຖ້າເກີນ 3 ເດືອນ ຈະຄິດໄລ່ເງິນເດືອນໃຫ້ 60% ຂອງເງິນເດືອນຜູ້ກ່ຽວເດືອນສຸດທ້າຍ, ແຕ່ມີໄລຍະບໍ່ເກີນ 6 ເດືອນ. ຖ້າເກີນ 6 ເດືອນແລ້ວ ຈະຕ້ອງມີການກວດກາສຸຂະພາບຄືນໃໝ່ ຖ້າແພດຢັ້ງຢືນວ່າ : ສຸຂະພາບຂອງຜູ້ກ່ຽວຈະດີຂຶ້ນພາຍໃນ 6 ເດືອນ ແມ່ນຈະສືບຕໍ່ໄດ້ຮັບເງິນເດືອນ 60% ຕໍ່ອີກ ແຕ່ບໍ່ເກີນ 6 ເດືອນ; ຖ້າສຸຂະພາບຂອງຜູ້ກ່ຽວບໍ່ດີຂຶ້ນພາຍໃນ 6 ເດືອນຂ້າງໜ້າ ສະພາການແພດຈະປະເມີນການເສຍອົງຄະ ຫຼື ເສຍກຳລັງແຮງງານ.

- <u>ປະເພດການເສຍອົງຄະ ຫຼື ເສຍກຳລັງແຮງງານ :</u>

| ລະດັບການເສຍອົງຄະ | ປະເພດເສຍອົງຄະ | ຮູບການອຸດໜູນ |
|---|---|---|
| 81 - 100% = 100% | I | ຮັບເປັນລາຍເດືອນ + ຄ່າແຮງງານຜູ້ດູແລ |
| 71 - 80% = 80% | II | ຮັບເປັນລາຍເດືອນ |

- <u>ວິທີຄິດໄລ່ເງິນອຸດໜູນ :</u>

ເອົາເງິນເດືອນຜູ້ກ່ຽວເດືອນສຸດທ້າຍ ແລ້ວຄູນໃຫ້ 2% ຄູນໃຫ້ປີການທີ່ຫັກເງິນເຂົ້າກອງທຶນປະກັນສັງຄົມຂອງ ທຫລ.

ຖ້າຫາກເງິນອຸດໜູນໜ້ອຍກວ່າເງິນເດືອນພື້ນຖານຕໍ່າສຸດຂອງ ທຫລ ແມ່ນໃຫ້ຖືເອົາເງິນເດືອນພື້ນຖານຕໍ່າສຸດຂອງ ທຫລ ເລີຍ.

**ມາດຕາ 11. ຄ່າແຮງງານຜູ້ດູແລ**

ພະນັກງານຜູ້ເສຍອົງຄະທີ່ໄດ້ຮັບການຢັ້ງຢືນຈາກສະພາການແພດວ່າເປັນຜູ້ເສຍອົງຄະ ຫຼື ເສຍກຳລັງແຮງງານຖາວອນ ບໍ່ສາມາດຊ່ວຍຕົນເອງໄດ້ ຊຶ່ງຕ້ອງມີຜູ້ດູແລ, ຄ່າແຮງງານຂອງຜູ້ດູແລນັ້ນ ເທົ່າກັບເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ ໃນແຕ່ລະໄລຍະ.

## ໝວດທີ IV

## ການອຸດໜູນເກີດລູກ, ບຳເນັດເກີດລູກ ແລະອຸດໜູນເພດຍິງ

**ມາດຕາ 12. ການອຸດໜູນເກີດລູກ**

ພະນັກງານເພດຍິງທີ່ໄດ້ຮັບອະນຸຍາດໃຫ້ລາພັກເກີດລູກ 3 ເດືອນ ແມ່ນຈະໄດ້ຮັບເງິນເດືອນເຕັມ ແລະນະໂຍບາຍຕ່າງໆຄືກັບເວລາຍັງເຮັດວຽກປົກກະຕິ. ໃນກໍລະນີ ພັກຄົບ 3 ເດືອນ ຖ້າແພດຢັ້ງຢືນວ່າຜູ້ກ່ຽວ ຫຼື ລູກຍັງສຸຂະພາບອ່ອນເພຍບໍ່ສາມາດເຮັດວຽກງານຕາມປົກກະຕິໄດ້ເທື່ອ ເວລາທີ່ພັກເກີນນັ້ນ ຈະຄິດໄລ່ເງິນເດືອນໃຫ້ 60% ຂອງເງິນເດືອນຜູ້ກ່ຽວເດືອນສຸດທ້າຍ, ແຕ່ມີໄລຍະບໍ່ເກີນ 3 ເດືອນ.

**ມາດຕາ 13. ບຳເນັດເກີດລູກ**

ພະນັກງານເພດຍິງ ແລະເມຍຂອງພະນັກງານ ທີ່ບໍ່ໄດ້ຮັບການຄຸ້ມຄອງຈາກລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ ໃນເວລາເກີດລູກ ຫຼື ລຸລູກ ໂດຍມີການຢັ້ງຢືນຈາກແພດກ່ຽວຂ້ອງ ແມ່ນຈະໄດ້ຮັບເງິນບຳເນັດເທົ່າກັບ 60% ຂອງເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ. ຖ້າເກີດ ຫຼື ລຸລູກຝາແຝດ ກໍ່ຈະໄດ້ຮັບເງິນບຳເນັດ ຜູ້ລະ 60%.

ນອກນີ້ຍັງມີສິດພັກ ວັນລະ 1 ຊົ່ວໂມງ ພາຍຫຼັງເກີດລູກໃນໄລຍະ 1 ປີ ລົງມາ ເພື່ອໃຫ້ນົມ ຫຼືເບິ່ງແຍງລູກ ແລະເອົາໄປສັກຢາກັນພະຍາດ.

**ມາດຕາ 14. ອຸດໜູນຮັກສາຄວາມງາມ**

ພະນັກງານ ນອກຈາກຈະຮັບນະໂຍບາຍອື່ນໆແລ້ວຍັງຈະໄດ້ຮັບເງິນ ອຸດໜູນຮັກສາຄວາມງາມດັ່ງນີ້:

- ເພດຍິງ 50.000 ກີບ/ຄົນ/ເດືອນ;
- ເພດຊາຍ 20.000 ກີບ/ຄົນ/ເດືອນ.

## ໝວດທີ V

## ອຸດໜູນເມຍ ແລະລູກພະນັກງານ

**ມາດຕາ 15. ເມຍ ແລະລູກ ພະນັກງານຜູ້ທີ່ຈະໄດ້ຮັບອຸດໜູນ**

1. ເມຍ ຈະໄດ້ຮັບເງິນອຸດໜູນຕາມທີ່ຂັ້ນເທິງກຳນົດໃຫ້ໃນແຕ່ລະໄລຍະ ຖ້າມີເງື່ອນໄຂ ດັ່ງນີ້ :
   - ບໍ່ໄດ້ສັງກັດລັດ, ບໍ່ມີລາຍຮັບເປັນປະຈຳແຕ່ລະເດືອນ ຈາກການຈັດຕັ້ງໃດໜຶ່ງ;

- ບໍ່ໄດ້ດຳເນີນທຸລະກິດ ທີ່ມີລາຍຮັບປະຈຳບໍ່ເກີນເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ ໃນແຕ່ລະໄລຍະ.

2. ລູກທີ່ຍັງບໍ່ທັນບັນລຸນິຕິພາວະ ( 18 ປີ ລົງມາ ) ແລະບໍ່ທັນແຕ່ງງານຈະໄດ້ຮັບເງິນອຸດໜູນຈາກທະນາຄານແຫ່ງ ສປປ ລາວ ຕາມອັດຕາທີ່ຂັ້ນເທິງກຳນົດໃນແຕ່ລະໄລຍະ;
3. ລູກຂອງຜູ້ທີ່ອອກອຸດໜູນເທື່ອດຽວ ຈະໄດ້ຮັບເງິນອຸດໜູນລູກ ຊຶ່ງຄິດໄລ່ໃຫ້ຜູ້ລະ 12 ເດືອນ ຕາມຈຳນວນລູກທີ່ໄດ້ຮັບເງິນອຸດໜູນນຳທະນາຄານແຫ່ງ ສປປ ລາວ.

**<u>ມາດຕາ 16.</u> ອຸດໜູນດູແລຕໍ່ເມຍ ແລະລູກຂອງພະນັກງານ**

ທະນາຄານແຫ່ງ ສປປ ລາວ ຈະອຸດໜູນຄ່າກວດສຸຂະພາບປະຈຳເດືອນຕໍ່ເມຍ ແລະລູກຂອງພະນັກງານ ( ທີ່ຍັງບໍ່ທັນບັນລຸນິຕິພາວະ ແລະບໍ່ທັນແຕ່ງງານ) ແມ່ນຈະໄດ້ຮັບອຸດໜູນ ຄົນລະ 100.000 ກີບ/ເດືອນ ( ສະເພາະເມຍ ແລະລູກຂອງພະນັກງານທີ່ໄດ້ຮັບອຸດໜູນນຳ ທຫລ ).

## ໝວດທີ VI

## ອຸດໜູນເສຍຊີວິດ

**<u>ມາດຕາ 17.</u> ອຸດໜູນຕໍ່ຄອບຄົວ ຫຼື ຜູ້ສືບທອດມູນມໍລະດົກ**

ພະນັກງານຫາກເສຍຊີວິດ ທະນາຄານແຫ່ງ ສປປ ລາວ ອຸດໜູນເສຍຊີວິດ ໃຫ້ແກ່ຄອບຄົວ ຫຼື ຜູ້ສືບທອດມູນມໍລະດົກຂອງຜູ້ກ່ຽວ ດັ່ງນີ້ :

1. ເສຍຊີວິດຍ້ອນອຸປະຕິເຫດແຮງງານ, ກຳລັງປະຕິບັດໜ້າທີ່ວຽກງານ ແລະພະຍາດອາຊີບ ຄອບຄົວຂອງຜູ້ເສຍຊີວິດໄດ້ຮັບການອຸດໜູນ ດັ່ງນີ້ :

- ອຸດໜູນເທື່ອດຽວ;
- ອຸດໜູນລາຍເດືອນ ປະກອບມີ : ເງິນອຸດໜູນໝ້າຍ, ອຸດໜູນລູກກຳພ້າ, ອຸດໜູນລ້ຽງດູ ພໍ່ ແລະແມ່, ພໍ່ ຫຼື ແມ່, ແຕ່ເງິນອຸດໜູນທັງໝົດລວມກັນ ຈະບໍ່ໃຫ້ເກີນ 80% ຂອງເງິນເດືອນໆສຸດທ້າຍ ຂອງຜູ້ເສຍຊີວິດ;

ໃນກໍລະນີຜູ້ເສຍຊີວິດ ຫາກຫັກເງິນເຂົ້າຄັງສະຫວັດດີການໜ້ອຍກວ່າ 15 ປີ (ແຕ່ເກີນ 72 ເດືອນ) ແມ່ນໃຫ້ກຳນົດເອົາ 15 ປີ ເປັນບ່ອນອີງໃນການຄິດໄລ່ເງິນອຸດໜູນລາຍເດືອນ ໃຫ້ຄອບຄົວຜູ້ເສຍຊີວິດ.

2. ເສຍຊີວິດຍ້ອນພະຍາດຂອງຜູ້ກ່ຽວເອງ ແລະອຸປະຕິເຫດທີ່ບໍ່ເນື່ອງມາຈາກອຸປະຕິເຫດແຮງງານ ຄອບຄົວຂອງຜູ້ເສຍຊີວິດ ໄດ້ຮັບການອຸດໜູນ ດັ່ງນີ້ :

- ລັດຖະກອນສົມບູນທີ່ຫັກເງິນເຂົ້າຄັງສະຫວັດດີການ 1 ເດືອນ ຂຶ້ນໄປ, ພະນັກງານບຳນານ ແລະເສຍອົງຄະ ຫາກເສຍຊີວິດ ຄອບຄົວຜູ້ກ່ຽວຈະໄດ້ຮັບອຸດໜູນເທື່ອດຽວ;
- ລັດຖະກອນທີ່ຫັກເງິນເຂົ້າຄັງສະຫວັດດີການ 15 ປີ ຂຶ້ນໄປ, ພະນັກງານບຳນານ ແລະເສຍອົງຄະຫາກເສຍຊີວິດ ຄອບຄົວຜູ້ກ່ຽວຈະໄດ້ຮັບອຸດໜູນເປັນລາຍເດືອນ.

3. ວິທີຄິດໄລ່ເງິນອຸດໜູນ.

3.1 ເງິນອຸດໜູນເທື່ອດຽວ :

ພະນັກງານ-ລັດຖະກອນສົມບູນທີ່ເສຍເງິນເຂົ້າຄັງສະຫວັດດີການສັງຄົມຂອງ ທຫລ ຫາກເສຍຊີວິດ, ຄອບຄົວຜູ້ກ່ຽວຈະໄດ້ຮັບການອຸດໜູນເທື່ອດຽວ ເທົ່າກັບເງິນເດືອນຜູ້ກ່ຽວເດືອນສຸດທ້າຍ ຄູນໃຫ້ຈຳນວນເດືອນທີ່ເສຍເງິນເຂົ້າຄັງສະຫວັດດີການ ຫານ ໃຫ້ 12 ເດືອນ.

ສຳລັບພະນັກງານທີ່ເສຍເງິນເຂົ້າຄັງສະຫວັດດີການ 72 ເດືອນ ລົງມາ ຈະໄດ້ຮັບການອຸດໜູນເທື່ອດຽວ ເທົ່າກັບເງິນເດືອນຜູ້ກ່ຽວເດືອນສຸດທ້າຍ ຄູນໃຫ້ 72 ເດືອນ ຫານໃຫ້ 12 ເດືອນ.

3.2 ເງິນອຸດໜູນເປັນລາຍເດືອນ :

- ອຸດໜູນໝ້າຍ .

ຜົວ ຫຼື ເມຍຂອງພະນັກງານທີ່ມີອາຍຸ 44 ປີ ຂຶ້ນໄປ, ເປັນຜູ້ທີ່ບໍ່ສາມາດອອກແຮງງານໄດ້ ແລະບໍ່ໄດ້ຮັບເງິນອຸດໜູນເສຍອົງຄະ ຫຼືບຳນານຈາກລະບົບປະກັນສັງຄົມແບບບັງຄັບໃດໜຶ່ງ, ບໍ່ສາມາດຫາລາຍໄດ້ດ້ວຍຕົນເອງ ແລະບໍ່ມີແຫຼ່ງລາຍຮັບອື່ນໆ ເຊັ່ນ : ການຄ້າຂາຍ, ການໃຫ້ເຊົ່າ, ດອກເບ້ຍ ແລະອື່ນໆ ໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ ຈະໄດ້ຮັບເງິນອຸດໜູນເປັນໝ້າຍ ຈົນກວ່າຜູ້ກ່ຽວຈະແຕ່ງງານໃໝ່ ດັ່ງນີ້ :

- ພະນັກງານປະຈຳການເສຍຊີວິດ ຜູ້ເປັນຜົວ ຫຼືເມຍ ໄດ້ຮັບເງິນອຸດໜູນເປັນໝ້າຍເທົ່າກັບເງິນເດືອນຜູ້ກ່ຽວເດືອນສຸດທ້າຍ ຄູນໃຫ້ 2% ຄູນໃຫ້ຈຳນວນປີການທີ່ຫັກເງິນເຂົ້າປະກັນສັງຄົມ ຄູນໃຫ້ 40% ຂອງເງິນເດືອນພື້ນຖານຜູ້ກ່ຽວ;

ກໍລະນີພະນັກງານບຳນານ, ຜູ້ເສຍອົງຄະເສຍຊີວິດ, ເງິນອຸດໜູນໝ້າຍ ແມ່ນເອົາເງິນບຳນານ ຫຼືເງິນເສຍອົງຄະເປັນບ່ອນອີງໃນການຄິດໄລ່.

- ອຸດໜູນລູກກຳພ້າ .

ລູກທີ່ມີອາຍຸຕໍ່າກ່ວາ 18 ປີ ລົງມາ ( ຍົກເວັ້ນຜູ້ທີ່ແຕ່ງງານແລ້ວ ) ໃນກໍລະນີຍັງສືບຕໍ່ຮຽນໜັງສື ໂດຍມີການຢັ້ງຢືນຈາກໂຮງຮຽນກ່ຽວຂ້ອງ ແມ່ນໄດ້ຮັບອຸດໜູນຈົນກວ່າຜູ້ກ່ຽວ ຈະຄົບ 23 ປີ.

໑ ຄອບຄົວທີ່ໄດ້ຮັບເງິນອຸດໜູນເປັນໝ້າຍ ໄດ້ຮັບເງິນອຸດໜູນຕາມປົກກະຕິ (ເງິນເດືອນລູກ) ແລະ 20% ຂອງເງິນເດືອນໆສຸດທ້າຍ ພໍ່ ຫຼື ແມ່;

໒ ຄອບຄົວທີ່ບໍ່ໄດ້ຮັບເງິນອຸດໜູນເປັນໝ້າຍ ໄດ້ຮັບເງິນອຸດໜູນ 30% ຂອງເງິນເດືອນໆສຸດທ້າຍ ພໍ່ ຫຼື ແມ່.

ສຳລັບເງິນອຸດໜູນລູກ ທັງໝົດ ບໍ່ໃຫ້ເກີນ 60% ຂອງເງິນເດືອນໆສຸດທ້າຍ ພໍ່ ຫຼືແມ່. ສ່ວນຜູ້ພິການ ແມ່ນໄດ້ຮັບເງິນອຸດໜູນຈົນກວ່າ ຜູ້ກ່ຽວມີວິຊາຊີບ. ສຳລັບຜູ້ທີ່ບໍ່ໄດ້ຮຽນໜັງສື ແລະບໍ່ໄດ້ຮັບເງິນອຸດໜູນນຳ ທຫລ ນັ້ນ ໄດ້ຮັບເງິນອຸດໜູນຄັ້ງດຽວ 40% ຂອງເງິນເດືອນໆສຸດທ້າຍ ພໍ່ ຫຼື ແມ່.

- ອຸດໜູນເງິນລ້ຽງດູພໍ່ ແລະແມ່, ພໍ່ ຫຼື ແມ່ .

ພໍ່ ແລະແມ່, ພໍ່ ຫຼື ແມ່ ທີ່ມີລູກຄົນດຽວ, ບໍ່ມີຜູ້ລ້ຽງດູ, ແມ່ມີອາຍຸ 55 ປີ ແລະພໍ່ມີອາຍຸ 60 ປີ ຂຶ້ນໄປ, ເປັນຜູ້ເສຍອົງຄະ ໂດຍມີການຢັ້ງຢືນຈາກສະພາການແພດ ໄດ້ຮັບເງິນອຸດໜູນລ້ຽງດູເທົ່າກັບເງິນເດືອນຂອງລູກຜູ້ທີ່ເສຍຊີວິດເດືອນສຸດທ້າຍ ຄູນໃຫ້ 2% ຄູນໃຫ້ຈຳນວນປີການທີ່ຫັກເງິນເຂົ້າຄັງສະຫວັດດີການ ຄູນໃຫ້ 40%. ໃນກໍລະນີຮັບທັງ 2 ຄົນ ໄດ້ຮັບເງິນອຸດໜູນລ້ຽງດູເທົ່າກັບເງິນເດືອນຂອງລູກຜູ້ທີ່ເສຍຊີວິດເດືອນສຸດທ້າຍ ຄູນໃຫ້ 2% ຄູນໃຫ້ຈຳນວນປີການທີ່ຫັກເງິນເຂົ້າຄັງສະຫວັດດີການ ຄູນໃຫ້ 60%.

ໃນກໍລະນີຜູ້ເສຍຊີວິດຫາກບໍ່ມີຜູ້ສືບທອດມູນມໍລະດົກ ຕາມທີ່ກຳນົດໄວ້ໃນກົດໝາຍຄອບຄົວ, ທະນາຄານແຫ່ງ ສປປ ລາວ ຈະອຸດໜູນແຕ່ເງິນສົ່ງສະການ ແລະກິນທານເພື່ອໃຫ້ການຈັດຕັ້ງ ແລະອຳນາດການປົກຄອງທ້ອງຖິ່ນຈັດພິທີສົ່ງສະການ.

**ມາດຕາ 18.** ອຸດໜູນສົ່ງສະການ

1. ພະນັກງານ ຫາກເສຍຊີວິດ ໄດ້ຮັບເງິນອຸດໜູນສົ່ງສະການ 9 ເທົ່າ ເງິນເດືອນໆສຸດທ້າຍຂອງຜູ້ກ່ຽວ ທີ່ໄດ້ຮັບກ່ອນເສຍຊີວິດ;

   ສຳລັບພະນັກງານທີ່ບໍ່ທັນໄດ້ຮັບເງິນເດືອນ ແລະບໍ່ທັນຫັກເງິນເຂົ້າຄັງສະຫວັດດີການຂອງ ທຫລ ຫາກເສຍຊີວິດຍ້ອນອຸປະຕິເຫດແຮງງານ ແລະພະຍາດອາຊີບ ແມ່ນໃຫ້ຖືເອົາເງິນເດືອນພື້ນຖານຕາມຊັ້ນ-ຂັ້ນຜູ້ກ່ຽວ ເປັນບ່ອນອີງໃນການຄິດໄລ່;
2. ເມຍ ຫຼື ຜົວ ຂອງພະນັກງານທີ່ບໍ່ຢູ່ໃຕ້ການຄຸ້ມຄອງຂອງລະບອບປະກັນສັງຄົມແບບບັງຄັບໃດໜຶ່ງ ຫາກເສຍຊີວິດ ໄດ້ຮັບເງິນອຸດໜູນສົ່ງສະການ 6 ເທົ່າ ເງິນເດືອນໆສຸດທ້າຍ ຂອງຜົວ ຫຼື ເມຍ ທີ່ເປັນພະນັກງານທະນາຄານແຫ່ງ ສປປ ລາວ;
3. ລູກທີ່ມີອາຍຸບໍ່ເກີນ 18 ປີ, ບໍ່ທັນແຕ່ງງານ ແລະບໍ່ຢູ່ໃຕ້ການຄຸ້ມຄອງຂອງລະບອບປະກັນສັງຄົມແບບບັງຄັບໃດໜຶ່ງ, ຖ້າຍັງຮຽນໜັງສື ແມ່ນບໍ່ເກີນ 23 ປີ ຫາກເສຍຊີວິດ ໄດ້ຮັບເງິນອຸດໜູນສົ່ງສະການ 3 ເທົ່າ ເງິນເດືອນໆສຸດທ້າຍ ຂອງພໍ່ ຫຼື ແມ່ ທີ່ເປັນພະນັກງານທະນາຄານແຫ່ງ ສປປ ລາວ.

**ມາດຕາ 19.** ອຸດໜູນກິນທານ

1. ພະນັກງານ ຫາກເສຍຊີວິດ, ທະນາຄານແຫ່ງ ສປປ ລາວ ກິນທານນຳ 10 ເທົ່າ ຂອງເງິນເດືອນພື້ນຖານຕ່ຳສຸດຂອງທະນາຄານແຫ່ງ ສປປ ລາວ ແລະພວງມາລາ 1 ພວງ;
2. ຜົວ,ເມຍ ແລະລູກພະນັກງານ ຫາກເສຍຊີວິດ, ທະນາຄານຈະກິນທານນຳ 6 ເທົ່າຂອງເງິນເດືອນພື້ນຖານຕ່ຳສຸດຂອງ ທະນາຄານແຫ່ງ ສປປ ລາວ(ນັບທັງຜູ້ຮັບເງິນອຸດໜູນ ແລະຜູ້ບໍ່ໄດ້ຮັບເງິນອຸດໜູນນຳ ທຫລ )
3. ພໍ່ ຫຼື ແມ່ ຂອງພະນັກງານ ຫາກເສຍຊີວິດ, ທະນາຄານແຫ່ງ ສປປ ລາວ ກິນທານນຳ 5 ເທົ່າຂອງເງິນເດືອນພື້ນຖານຕ່ຳສຸດຂອງທະນາຄານແຫ່ງ ສປປ ລາວ;

4. ພໍ່ ຫຼື ແມ່ ຂອງຜົວ ຫຼື ເມຍພະນັກງານ ຫາກເສຍຊີວິດ, ທະນາຄານ ແຫ່ງ ສປປ ລາວ ກິນທານນຳ 4 ເທົ່າ ຂອງເງິນເດືອນພື້ນຖານຕ່ຳສຸດຂອງ ທະນາຄານ ແຫ່ງ ສປປ ລາວ;
5. ໃນກໍລະນີຜົວ, ເມຍ, ພໍ່, ແມ່ ແລະລູກ (ຂອງພະນັກງານ) ເປັນພະນັກງານຂອງທະນາຄານ ແຫ່ງ ສປປ ລາວ ຫາກເສຍຊີວິດ, ທະນາຄານແຫ່ງ ສປປ ລາວ ກິນທານນຳຕາມທີ່ກຳນົດໄວ້ ໃນ ຂໍ້ 1 ຂອງມາດຕານີ້.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 20. ການຈັດຕັ້ງປະຕິບັດ**

ໃຫ້ຫ້ອງການ, ກົມຈັດຕັ້ງແລະພະນັກງານ, ບັນດາກົມ ແລະທຽບເທົ່າ, ທຫລ ພາກເໜືອ, ພາກກາງ ແລະພາກໃຕ້, ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ເປັນເຈົ້າການຈັດຕັ້ງເຜີຍແຜ່ໃຫ້ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຮັບຮູ້-ເຂົ້າໃຈຢ່າງທົ່ວເຖິງເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ ໃນການຈັດຕັ້ງປະຕິບັດຕົວຈິງຫາກພົບຂໍ້ຫຍຸ້ງຍາກ ຕ້ອງສະຫຼຸບລາຍງານຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໂດຍຜ່ານ ກົມຈັດຕັ້ງແລະພະນັກງານ ເພື່ອຄົ້ນຄວ້າປັບປຸງແກ້ໄຂໃຫ້ທັນສະພາບການ.

**ມາດຕາ 21. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ ວັນທີ 01/01/2011 ເປັນຕົ້ນໄປ. ທຸກນິຕິກຳທີ່ນຳໃຊ້ໃນເມື່ອກ່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ພູເພັດ ຄຳພູນວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 53 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 10 FEB 2011

# ບົດແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມ ຕໍ່ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011

- ອີງຕາມບົດບັນທຶກກອງປະຊຸມຄະນະພັກ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 85/ຄພ.ທຫລ ລົງວັນທີ 20/08/2010;
- ອີງຕາມຂໍ້ຕົກລົງ ວ່າດ້ວຍລະບຽບສະຫວັດດີການສັງຄົມ ຕໍ່ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ລະບຽບສະຫວັດດີການສັງຄົມຕໍ່ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011 ໃຫ້ໄດ້ຮັບຜົນດີ, ກົມຈັດຕັ້ງແລະພະນັກງານ ຈຶ່ງອອກບົດແນະນຳໃຫ້ເອກະພາບຕື່ມ ຊຶ່ງມີເນື້ອໃນລະອຽດດັ່ງນີ້:

## ໝວດທີ I
## ຫຼັກການລວມ

1. <u>ຈຸດປະສົງ</u>

ບົດແນະນຳສະບັບນີ້ວາງອອກ ເພື່ອອະທິບາຍບາງເນື້ອໃນ, ຫຼັກການ, ວິທີການ ແລະມາດຕະການຕ່າງໆທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງໃຫ້ລະອຽດ, ຈະແຈ້ງ ເຮັດໃຫ້ທຸກຄົນມີຄວາມເຂົ້າໃຈ, ເປັນເອກະພາບ ແລະຮັບປະກັນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ.

2. <u>ຄາດໝາຍ</u>

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການອຸດໜູນຕ່າງໆເຊັ່ນ: ອຸດໜູນດູແລສຸຂະພາບ, ເກີດລູກ, ບຳເນັດເກີດລູກ, ອຸປະຕິເຫດແຮງງານ, ພະຍາດອາຊີບ, ເສຍອົງຄະ, ອຸດໜູນຄອບຄົວຜູ້ເສຍຊີວິດ ແລະສິ່ງສະການຕໍ່ພະນັກງານ, ລັດຖະກອນ, ພະນັກງານບຳນານ, ເສຍອົງຄະ, ຜູ້ຢູ່ໃຕ້ການດູແລໃຫ້ມີຄວາມຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

## ໝວດທີ II

## ການອຸດໜູນປິ່ນປົວສຸຂະພາບ

### 1. ວົງເງິນປິ່ນປົວສຸຂະພາບຂອງພະນັກງານ

ເພື່ອເປັນການບໍາລຸງຮັກສາສຸຂະພາບຂອງພະນັກງານ ໃນແຕ່ລະປີພະນັກງານຜູ້ໜຶ່ງມີສິດປິ່ນປົວ ຫຼື ບໍາລຸງຮັກສາສຸຂະພາບຂອງຕົນໄດ້ໃນວົງເງິນ 10 ເທົ່າຂອງເງິນເດືອນພື້ນຖານຕາມຊັ້ນ-ຂັ້ນເງິນເດືອນນະເວລານັ້ນຂອງໃຜລາວ (ຍົກເວັ້ນ ຂໍ້ 4.3 ມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມຕໍ່ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011).

<u>ຕົວຢ່າງ</u>: ທ່ານ ກ ມີເງິນເດືອນພື້ນຖານ 1.518. 000 ກີບ x 10 ເທົ່າ = <u>15.180.000</u> ກີບ ແມ່ນວົງເງິນທີ່ຜູ້ກ່ຽວມີສິດນໍາໃຊ້ປິ່ນປົວ, ຮັກສາສຸຂະພາບຕາມລະບຽບການ.

### 2. ການນໍາໃຊ້ວົງເງິນປິ່ນປົວສຸຂະພາບ

ທະນາຄານແຫ່ງ ສປປ ລາວ ປະຕິບັດນະໂຍບາຍອຸດໜູນບໍາລຸງຮັກສາສຸຂະພາບ ໃຫ້ພະນັກງານເດືອນລະ 500.000 ກີບ/ຄົນ. ການປະຕິບັດນະໂຍບາຍນີ້ແມ່ນກໍລະນີທີ່ພະນັກງານມີສຸຂະພາບດີ, ເຈັບເປັນປິ່ນປົວເລັກນ້ອຍ, ແຕ່ໃນກໍລະນີທີ່ເຈັບເປັນຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 4.1-4.2 ຂອງມາດຕາ 4 ຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມຕໍ່ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011) ຫາກນໍາໃຊ້ໝົດວົງເງິນທີ່ຍັງເຫຼືອ (ໃນຈໍານວນ 10 ເທົ່າ) ກ່ອນເດືອນ 12 ຂອງປີນັ້ນ, ໃນເດືອນທີ່ເຫຼືອຜູ້ກ່ຽວຈະບໍ່ໄດ້ຮັບຄ່າບໍາລຸງຮັກສາສຸຂະພາບໃນເດືອນທີ່ຍັງເຫຼືອຕື່ມອີກ, ແຕ່ຖ້າຍັງກໍ່ຈະໄດ້ຮັບໃນຈໍານວນທີ່ເຫຼືອຕົວຈິງ ຕາມວົງເງິນທີ່ຍັງເຫຼືອໃນບ້ອງ 10 ເທົ່າ ແລະບໍ່ສາມາດສະສົມໄວ້ປີຕໍ່ໄປໄດ້.

<u>ຕົວຢ່າງ:</u> ທ່ານ ກ ມີເງິນເດືອນພື້ນຖານ 1.518.000 ກີບ, ຈໍານວນເງິນທີ່ຜູ້ກ່ຽວສາມາດປິ່ນປົວ ຫຼືບໍາລຸງສຸຂະພາບແມ່ນ 1.518.000 ກີບ x 10 ເທົ່າ= <u>15.180.000 ກີບ</u>, ນັບແຕ່ເດືອນ 1-6 ຜູ້ກ່ຽວສຸຂະພາບແຂງແຮງດີ ຫຼືເຈັບເປັນເລັກນ້ອຍ ຊຶ່ງໄດ້ຮັບຄ່າບໍາລຸງຮັກສາສຸຂະພາບເດືອນລະ 500.000 ກີບx6 ເດືອນ= <u>3.000.000</u> ກີບ, ວົງເງິນທີ່ຍັງເຫຼືອແມ່ນ 15.180.000 ກີບ-3.000.000 ກີບ = <u>12.180.000</u> ກີບ;

- <u>ກໍລະນີ 1</u>: ໃນເດືອນ 7 ຜູ້ກ່ຽວເຈັບເປັນຕ້ອງໄດ້ນອນປິ່ນປົວຢູ່ໂຮງໝໍ ແລະຕ້ອງໄດ້ໃຊ້ເງິນ 12.180.000 ກີບ ໃນກໍລະນີນີ້ ທຫລຈະປະຕິບັດນະໂຍບາຍ <u>12.180.000</u> ກີບ ເທົ່ານັ້ນ ແລະເລີ່ມແຕ່ເດືອນ 7-12 ປີນັ້ນ ກໍ່ຈະບໍ່ໄດ້ປະຕິບັດຄ່າບໍາລຸງຮັກສາໃນແຕ່ລະເດືອນຕື່ມອີກ.

- <u>ກໍລະນີ 2:</u> ໃນເດືອນ 7 ຜູ້ກ່ຽວຈໍາເປັນຕ້ອງໄດ້ນອນປິ່ນປົວຢູ່ໂຮງໝໍ ແລະຕ້ອງໄດ້ໃຊ້ເງິນພຽງ 1.000.000 ກີບ, ໃນກໍລະນີນີ້ ທຫລ ຈະປະຕິບັດນະໂຍບາຍ 1.000.000 ກີບ ແລະໃນເດືອນ 7-12 ຂອງປີນັ້ນກໍ່ຈະປະຕິບັດຄ່າບໍາລຸງຮັກສາສຸຂະພາບໃນແຕ່ລະເດືອນຕື່ມອີກ.

- <u>ກໍລະນີ 3:</u> ນັບແຕ່ເດືອນ 1-12 ປີນັ້ນ, ຜູ້ກ່ຽວຫາກມີສຸຂະພາບດີ ຫຼືເຈັບເປັນເລັກນ້ອຍ ຊຶ່ງໄດ້ຮັບຄ່າບໍາລຸງຮັກສາສຸຂະພາບ 500.000 ກີບໃນແຕ່ລະເດືອນ ຊຶ່ງລວມທັງໝົດ 500.000 ກີບ x12 ເດືອນ= <u>6.000.000</u> ກີບ ວົງເງິນທີ່ຍັງເຫຼືອແມ່ນ 15.180.000 ກີບ - 6.000.000 ກີບ = <u>9.180.000</u> ກີບ ແມ່ນບໍ່ສາມາດສະສົມໄວ້ໃນປີຕໍ່ໄປໄດ້.

- <u>ກໍລະນີ 4:</u> ໃນເດືອນ 7 ຜູ້ກ່ຽວຈໍາເປັນຕ້ອງໄດ້ນອນປິ່ນປົວຢູ່ໂຮງໝໍ ແລະຕ້ອງໄດ້ໃຊ້ເງິນ 10.000.000 ກີບ ກໍລະນີນີ້ ທຫລ ຈະປະຕິບັດນະໂຍບາຍ 10.000.000 ກີບ ແລະຍັງປະຕິບັດຄ່າບໍາລຸງຮັກສາສຸຂະພາບໃນແຕ່ລະເດືອນຕາມວົງເງິນທີ່ຍັງເຫຼືອຕື່ມອີກ.

ພະນັກງານທີ່ເຈັບເປັນຍ້ອນເກີດຈາກວິຊາຊີບ, ອຸປະຕິເຫດແຮງງານໃນເວລາປະຕິບັດໜ້າທີ່ວຽກງານຕາມການຈັດຕັ້ງມອບໝາຍ ຫຼືໃນເວລາໄປການມາການແຕ່ລະວັນຕົນເອງຫາກໄດ້ຮັບຜິດຊອບຄ່າປິ່ນປົວ ຊຶ່ງມີຄວາມຈໍາເປັນຕ້ອງໃຊ້ຈ່າຍເກີນວົງເງິນ 10 ເທົ່າຂອງຕົນ, ຈໍານວນເງິນທີ່ເກີນດັ່ງກ່າວ ທຫລ ຈະຮັບຜິດຊອບ 100%

ພະນັກງານສົມບູນ ຫາກມີຄວາມຈໍາເປັນຕ້ອງໄດ້ນໍາໃຊ້ແວ່ນຕາໃນລະດັບ ບວກ ຫຼືລົບ 0.5% ຂຶ້ນໄປ ທຫລ ຈະປະຕິບັດນະໂຍບາຍຄ່າຕັດແວ່ນຕາດັ່ງກ່າວ 2 ປີ/ຄັ້ງ ໃນວົງເງິນບໍ່ເກີນ 500.000 ກີບ ແຕ່ຕ້ອງໄດ້ຮັບການຢັ້ງຢືນຈາກແພດໝໍກ່ຽວຂ້ອງ.

### 3. ການສະເໜີຊົດເຊີຍຄ່າປິ່ນປົວ

ພະນັກງານຫາກເຈັບເປັນ ຕ້ອງໄດ້ນອນປິ່ນປົວຢູ່ໂຮງໝໍ ມີຄວາມຕ້ອງການສະເໜີຂໍຊົດເຊີຍຄ່າປິ່ນປົວຄືນ ຫຼັງຈາກອອກໂຮງໝໍ ແມ່ນໃຫ້ປະກອບເອກະສານຕາມ ມາດຕາ 5 ຂອງຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມຕໍ່ພະນັກງານທະນາຄານ ແຫ່ງ ສປປ ລາວສະບັບເລກ ທີ 07/ທຫລ ລົງວັນທີ 07/01/2011. ໃນກໍລະນີ ພະນັກງານດັ່ງກ່າວຍັງນອນໂຮງໝໍ ແຕ່ມີຄວາມຈໍາເປັນຕ້ອງໄດ້ໃຊ້ເງິນເພື່ອປິ່ນປົວ ແມ່ນມີສິດສະເໜີຂໍການຊົດເຊີຍຄືນ ໂດຍໃຫ້ກົມກ່ຽວຂ້ອງເປັນຜູ້ຢັ້ງຢືນ.

### 4. ການກວດສຸຂະພາບປະຈໍາປີ:

ທະນາຄານແຫ່ງ ສປປ ລາວ ປະຕິບັດນະໂຍບາຍຄ່າກວດສຸຂະພາບປະຈໍາປີ 01 ຄັ້ງ/ປີ ໃຫ້ພະນັກງານທີ່ເຮັດວຽກນໍາທາດເບື່ອ, ອະນາໄມ, ຄູສອນປະຈໍາ ແລະພະນັກງານຜູ້ທີ່ມີອາຍຸກະສຽນ ສະເລ່ຍ 50 ປີ (48 ປີ-50 ປີ) ຂຶ້ນໄປ ຊຶ່ງໄດ້ໄປກວດສຸຂະພາບປະຈໍາປີ ຢູ່ໂຮງໝໍສູນກາງ (ໂຮງໝໍລັດ) ແລະແຂວງ ຕາມຈໍານວນເງິນທີ່ກວດຕົວຈິງ.

### 5. ຄ່າເດີນທາງເພື່ອມາປິ່ນປົວສຸຂະພາບ.

ທະນາຄານແຫ່ງ ສປປ ລາວ ຈະປະຕິບັດນະໂຍບາຍຄ່າເດີນທາງໄປ-ກັບ (ຄ່າປີ້ລົດ ຫຼືຍົນຕາມການນໍາໃຊ້ຕົວຈິງ) ໃຫ້ແກ່ພະນັກງານທີ່ປະຈໍາການຢູ່ບັນດາສາຂາ ທຫລ ຢູ່ທ້ອງຖິ່ນ ທີ່ມີຄວາມຈໍາເປັນຕ້ອງໄດ້ມາກວດ ຫຼື ປິ່ນປົວສຸຂະພາບຢູ່ສູນກາງ ແຕ່ຕ້ອງມີໃບນໍາສົ່ງຈາກແພດກ່ຽວຂ້ອງ ( ຍົກເວັ້ນກໍລະນີສຸກເສີນ ) ສ່ວນຄ່າໃຊ້ຈ່າຍໃນການປິ່ນປົວແມ່ນປະຕິບັດຕາມລະບຽບການທີ່ໄດ້ກໍານົດໄວ້.

ໃນກໍລະນີມາເຮັດວຽກ ແລະກວດສຸຂະພາບພ້ອມກັນ ແມ່ນໃຫ້ຖືເອົາຄ່າເດີນທາງໄປ-ກັບໃນການໄປວຽກທາງລັດຖະການ.

## ໝວດທີ III

## ການອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ ແລະອຸດໜູນຜູ້ເສຍອົງຄະ

### 1. ການອຸດໜູນອຸປະຕິເຫດແຮງງານ ແລະພະຍາດອາຊີບ.

ພະນັກງານທີ່ເຈັບເປັນອັນເນື່ອງມາຈາກວິຊາຊີບ, ອຸປະຕິເຫດແຮງງານໃນເວລາປະຕິບັດໜ້າທີ່ຕາມການມອບໝາຍຂອງການຈັດຕັ້ງມີສິດພັກປິ່ນປົວລວມທັງໝົດບໍ່ໃຫ້ເກີນ 15 ເດືອນ. ຖ້າເກີນໄລຍະເວລາດັ່ງກ່າວຖືວ່າເສຍອົງຄະ ຫຼືເສຍກຳລັງແຮງງານ ຊຶ່ງການປະຕິບັດນະໂຍບາຍໃນໄລຍະທີ່ພັກປິ່ນປົວດັ່ງກ່າວ ແລະການເສຍອົງຄະ ຫຼືການເສຍກຳລັງແຮງງານ ແມ່ນໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມຕໍ່ພະນັກງານທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011.

- <u>ວິທີຄິດໄລ່ເງິນອຸດໜູນເສຍອົງຄະ ຫຼືເສຍກຳລັງແຮງງານຖາວອນ ມີ 2 ວິທີ ຄື:</u>
  1. ເງິນອຸດໜູນເປັນລາຍເດືອນ: ແມ່ນໃຫ້ເອົາ 80% ເງິນເດືອນພື້ນຖານຂອງຜູ້ກ່ຽວເດືອນສຸດທ້າຍແລ້ວ ຄູນເປີເຊັນຂອງການເສຍອົງຄະ ຫຼືເສຍກຳລັງແຮງງານ;

ສຳລັບຜູ້ທີ່ບໍ່ສາມາດອອກແຮງງານໄດ້ ຫຼື ໄດ້ຮັບແຕ່ເງິນອຸດໜູນເສຍອົງຄະນັ້ນ, ຫາກເງິນອຸດໜູນໜ້ອຍກວ່າເງິນເດືອນພື້ນຖານ ຂັ້ນ 1/5 ຂອງເງິນເດືອນພື້ນຖານ ທຫລ ແມ່ນໃຫ້ເອົາເງິນເດືອນພື້ນຖານ ຂັ້ນ 1/5 ຂອງເງິນເດືອນພື້ນຖານ ທຫລ ເລີຍ ໂດຍອີງຕາມຂັ້ນ-ຂັ້ນເງິນເດືອນຂອງ ທຫລ ທີ່ນຳໃຊ້ໃນແຕ່ລະໄລຍະ.

<u>ຕົວຢ່າງ:</u> ທ່ານ ຂ ຖືກປະເມີນເປັນຜູ້ເສຍອົງຄະປະເພດ IV, ເປີເຊັນເສຍອົງຄະເທົ່າກັບ 60%, ເງິນເດືອນພື້ນຖານຂອງທ່ານ ຂ ເດືອນສຸດທ້າຍເທົ່າກັບ 1.518.000 ກີບ.

ອຸດໜູນລາຍເດືອນ= 80% x 1.518.000 ກີບ x 60% = 728.640 ກີບ ຕ່ຳກວ່າເງິນເດືອນພື້ນຖານ ຂັ້ນ 1/5 ຂອງ ທຫລ. ດັ່ງນັ້ນ, ເງິນອຸດໜູນເສຍອົງຄະຂອງທ່ານ ຂ ໃຫ້ຖືເອົາເງິນເດືອນພື້ນຖານ ຂັ້ນ 1/5 ຂອງທຫລ ໃນແຕ່ລະໄລຍະ.

2. ເງິນອຸດໜູນເທື່ອດຽວ : ແມ່ນໃຫ້ເອົາເປີເຊັນຂອງການເສຍອົງຄະ ຫຼືເສຍກຳລັງແຮງງານຄູນໃຫ້ເງິນເດືອນພື້ນຖານຂອງຜູ້ກ່ຽວ ເດືອນສຸດທ້າຍ ແລ້ວຄູນໃຫ້ 12 ເດືອນ.

<u>ຕົວຢ່າງ:</u> ທ່ານ ຄ ເສຍອົງຄະປະເພດ VII ເທົ່າກັບ 30%, ເງິນເດືອນພື້ນຖານຂອງຜູ້ກ່ຽວເດືອນສຸດທ້າຍເທົ່າກັບ 1.518.000 ກີບ, ເງິນອຸດໜູນເທື່ອດຽວ= 30% x 1.518.000 ກີບ x 12 ເດືອນ= 5.464.800 ກີບ.

### 2. ການອຸດໜູນຜູ້ເສຍອົງຄະ

ພະນັກງານທີ່ເສຍອົງຄະຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມຕໍ່ພະນັກງານ ທຫລ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011 ຈະໄດ້ຮັບອຸດໜູນເສຍອົງຄະດັ່ງນີ້:

- ວິທີຄິດໄລ່ເງິນອຸດໜູນ :

ເອົາເງິນເດືອນພື້ນຖານຜູ້ກ່ຽວເດືອນສຸດທ້າຍແລ້ວຄູນໃຫ້ 2% ຄູນໃຫ້ປີການທີ່ຫັກເງິນເຂົ້າຄັງສະຫວັດດີການສັງຄົມຂອງ ທຫລ.

ຖ້າຫາກເງິນອຸດໜູນໜ້ອຍກວ່າເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ ແມ່ນໃຫ້ຖືເອົາເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ ເລີຍ.

ຕົວຢ່າງ: ທ່ານ ຄ ເສຍອົງຄະ, ເງິນເດືອນພື້ນຖານເດືອນສຸດທ້າຍເທົ່າກັບ 1.518.000 ກີບ, ຈຳນວນປີການທີ່ໄດ້ຫັກເງິນເຂົ້າຄັງສະຫວັດດີການສັງຄົມ 12 ປີ.

ເງິນອຸດໜູນເສຍອົງຄະເທົ່າກັບ 1.518.000 ກີບ x 2% x 12 ປີ= 364.320 ກີບ ຕ່ຳກວ່າເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ. ດັ່ງນັ້ນ, ເງິນອຸດໜູນເສຍອົງຄະຂອງທ່ານ ຄ ໃຫ້ຖືເອົາເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ ໃນແຕ່ລະໄລຍະ.

### 3. ການອຸດໜູນຄ່າແຮງງານຜູ້ດູແລ

ພະນັກງານຜູ້ເສຍອົງຄະ ຫຼືເສຍກຳລັງແຮງງານຖາວອນ ທີ່ບໍ່ສາມາດຊ່ວຍຕົນເອງໄດ້ ທຫລ ຈະປະຕິບັດນະໂຍບາຍຕໍ່ຜູ້ດູແລ ໃນແຕ່ລະເດືອນເທົ່າກັບເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ ໃນແຕ່ລະໄລຍະ ໃນຈຳນວນ 1 ຄົນຈົນກວ່າຜູ້ກ່ຽວເສຍຊີວິດ.

ຕົວຢ່າງ: ທ່ານ ກ ເສຍອົງຄະ ມີຜູ້ດູແລ 1 ຄົນ, ຜູ້ດູແລຈະໄດ້ຮັບຄ່າແຮງງານ = ເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ ປັດຈຸບັນ 880.000 ກີບ

ໃນກໍລະນີ ທ່ານ ກ ມີຜູ້ດູແລ 2 ຄົນ, ຜູ້ດູແລດັ່ງກ່າວຈະໄດ້ຮັບຄ່າແຮງງານຜູ້ລະ = 880.000 ຫານ 2= 440.000 ກີບ.

## ໝວດທີ IV

## ການອຸດໜູນເກີດລູກ, ບຳເນັດເກີດລູກ ແລະອຸດໜູນເພດຍິງ

### 1. ບຳເນັດການເກີດລູກ

ພະນັກງານເພດຍິງ ແລະເມຍຂອງພະນັກງານ ທີ່ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມຕໍ່ພະນັກງານ ທຫລ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011 ເວລາເກີດລູກ ຫຼື ລຸລູກ ໂດຍມີການຢັ້ງຢືນຈາກແພດກ່ຽວຂ້ອງແມ່ນຈະໄດ້ຮັບເງິນບຳເນັດເທົ່າກັບ 60% ຂອງເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ. ຖ້າເກີດ ຫຼື ລຸລູກຝາແຝດ ກໍ່ຈະໄດ້ຮັບເງິນບຳເນັດ ຜູ້ລະ 60% ເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ.

ຕົວຢ່າງ: ນ ກ ເກີດລູກ, ເງິນເດືອນພື້ນຖານຕ່ຳສຸດຂອງ ທຫລ ເທົ່າກັບ 880.000 ກີບ, ເງິນອຸດໜູນເກີດລູກເທົ່າກັບ 880.000 ກີບ x 60%= 528.000 ກີບ.

ກໍລະນີລູກແຝດ 2 ຄົນ, ເງິນບຳເນັດເກີດລູກ = 528.000 ກີບ x 2= 1.056.000 ກີບ.

## ໝວດທີ V

## ການອຸດໜູນເມຍ ແລະລູກພະນັກງານ

### 1. ເມຍ ແລະ ລູກພະນັກງານຜູ້ທີ່ຈະໄດ້ຮັບອຸດໜູນ

ເມຍ ແລະລູກຜູ້ທີ່ມີເງື່ອນໄຂຕາມມາດຕາ 15 ຂອງຂໍ້ຕົກລົງສະບັບເລກທີ 07/ທຫລ ລົງວັນທີ 07/01/2011 ນອກຈາກຈະໄດ້ຮັບເງິນອຸດໜູນຕາມທີ່ຂັ້ນເທິງກຳນົດໃຫ້ໃນແຕ່ລະໄລຍະແລ້ວ ຍັງໄດ້ຮັບຄ່າອຸດໜູນດູແລສຸຂະພາບ, ກວດພະຍາດ ຜູ້ລະ 100.000 ກີບ/ເດືອນ.

## ໝວດທີ VI

## ອຸດໜູນເສຍຊີວິດ

### 1. ອຸດໜູນຕໍ່ຄອບຄົວ ຫຼືຜູ້ສືບທອດມູນມໍລະດົກ

ພະນັກງານຫາກເສຍຊີວິດ ທະນາຄານແຫ່ງ ສປປ ລາວ ອຸດໜູນເສຍຊີວິດ ໃຫ້ແກ່ຄອບຄົວ ຫຼື ຜູ້ສືບທອດມູນມໍລະດົກຂອງຜູ້ກ່ຽວ ທີ່ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມຕໍ່ພະນັກງານ ທຫລ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011.

➔ ວິທີຄິດໄລ່ເງິນອຸດໜູນ.

1. ອຸດໜູນເທື່ອດຽວ:

ພະນັກງານ-ລັດຖະກອນສົມບູນທີ່ເສຍເງິນເຂົ້າຄັງສະຫວັດດີການສັງຄົມຂອງ ທຫລ ແຕ່ 01 ເດືອນຂຶ້ນໄປຫາກເສຍຊີວິດ, ຄອບຄົວຜູ້ກ່ຽວຈະໄດ້ຮັບການອຸດໜູນເທື່ອດຽວ ເທົ່າກັບເງິນເດືອນພື້ນຖານຂອງຜູ້ກ່ຽວເດືອນສຸດທ້າຍ ຄູນໃຫ້ 72 ເດືອນ ຫານໃຫ້ 12 ເດືອນ.

ຕົວຢ່າງ: ທ່ານ ກ ເສຍຊີວິດ ຜູ້ກ່ຽວຈ່າຍເງິນສົມທົບ 12 ເດືອນ (ໜ້ອຍກວ່າ 72 ເດືອນ) ແມ່ນໃຫ້ຖືເອົາ 72 ເດືອນເລີຍ ແລະເງິນເດືອນພື້ນຖານເດືອນສຸດທ້າຍເທົ່າກັບ 1.518.000 ກີບ

ເງິນອຸດໜູນເທື່ອດຽວ = 1.518.000 ກີບ x 72 ເດືອນ = 9.108.000 ກີບ.
12 ເດືອນ

ໃນກໍລະນີພະນັກງານທີ່ເສຍເງິນເຂົ້າຄັງສະຫວັດດີການສັງຄົມ ທຫລ ແຕ່ 72 ເດືອນຂຶ້ນໄປຫາກເສຍຊີວິດ, ຄອບຄົວຜູ້ກ່ຽວຈະໄດ້ຮັບການອຸດໜູນ ໂດຍເອົາເງິນເດືອນພື້ນຖານຜູ້ກ່ຽວເດືອນສຸດທ້າຍ ຄູນໃຫ້ຈຳນວນເດືອນທີ່ເສຍເງິນເຂົ້າຄັງສະຫວັດດີການ ຫານໃຫ້ 12 ເດືອນ.

ຕົວຢ່າງ: ທ່ານ ຂ ເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫຼືພະຍາດອາຊີບ, ຈ່າຍເງິນເຂົ້າຄັງສະຫວັດດີການສັງຄົມ 10 ປີ (120 ເດືອນ), ເງິນເດືອນພື້ນຖານເດືອນສຸດທ້າຍເທົ່າກັບ 1.518.000 ກີບ.

ອຸດໜູນເທື່ອດຽວ = 1.518.000 ກີບ x 120 ເດືອນ = 15.180.000 ກີບ
12 ເດືອນ

2. ອຸດໜູນລາຍເດືອນ: ປະກອບດ້ວຍເງິນອຸດໜູນໝ້າຍ, ອຸດໜູນກຳພ້າ, ອຸດໜູນລ້ຽງດູພໍ່ ແລະແມ່, ພໍ່ ຫຼືແມ່ ຊຶ່ງຈະຈ່າຍໃຫ້ຜົວ ຫຼືເມຍ, ລູກ, ພໍ່ ຫຼືແມ່ ຂອງພະນັກງານທີ່ເສຍຊີວິດ ລະອຽດດັ່ງນີ້:

ພະນັກງານລັດຖະກອນທີ່ຫັກເງິນເຂົ້າຄັງສະຫວັດດີການ 15 ປີຂຶ້ນໄປ, ພະນັກງານບຳນານ ແລະເສຍອົງຄະຫາກເສຍຊີວິດ ຄອບຄົວຜູ້ກ່ຽວຈະໄດ້ຮັບອຸດໜູນເປັນລາຍເດືອນ ໂດຍອີງຕາມເງື່ອນໄຂທີ່ໄດ້

## ໝວດທີ VII
## ວິທີຈັດຕັ້ງປະຕິບັດ

1. ມອບໃຫ້ ຫ້ອງການ ທຫລ, ບັນດາກົມ-ທຽບເທົ່າ, ສາຂາ ທຫລ ຢູ່ທ້ອງຖິ່ນ ແລະພາກສ່ວນທີ່ກ່ຽວຂ້ອງເປັນຜູ້ເຜີຍແຜ່, ຈັດຕັ້ງປະຕິບັດບົນພື້ນຖານອີງໃສ່ເນື້ອໃນຈິດໃຈ ຂອງຂໍ້ຕົກລົງສະບັບເລກທີ 07/ທຫລ ລົງວັນທີ 07/01/2011 ແລະບົດແນະນຳສະບັບນີ້ຕາມໜ້າທີ່ຂອງໃຜລາວ;
2. ຂອດຈັດຕັ້ງປະຕິບັດຕົວຈິງ ຖ້າຫາກພົບບັນຫາໃດບໍ່ຈະແຈ້ງ ຫຼືພົບຄວາມຫຍຸ້ງຍາກ ແມ່ນໃຫ້ລົມກັບພາກສ່ວນກ່ຽວຂ້ອງ ເພື່ອຂໍຄວາມເຫັນຊີ້ນຳຈາກຂັ້ນເທິງ ແລະພ້ອມກັນແກ້ໄຂໃຫ້ທັນເວລາ;
3. ມອບໃຫ້ພະນັກງານທີ່ມີເງື່ອນໄຂຕາມລະບຽບການສະບັບນີ້ ເປັນເຈົ້າການສະເໜີເຖິງຫ້ອງການ ທຫລ ເພື່ອຂໍນະໂຍບາຍຕ່າງໆຕາມລະບຽບການ;
4. ບົດແນະນຳສະບັບນີ້ມີຜົນສັກສິດນັບແຕ່ວັນທີ 01/01/2011 ເປັນຕົ້ນໄປ. ທຸກນິຕິກຳທີ່ນຳໃຊ້ໃນເມື່ອກ່ອນ ທີ່ຂັດກັບບົດແນະນຳສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຫົວໜ້າກົມຈັດຕັ້ງແລະພະນັກງານ

ທະນາຄານແຫ່ງ ສ.ປ.ປ.ລາວ ★ ກົມຈັດຕັ້ງແລະພະນັກງານ

ຄຳວົງ ສີບພະວົງ

ກຳນົດໄວ້ໃນ ຂໍ້ 3.2 ມາດຕາ 17 ຂອງຂໍ້ຕົກລົງວ່າດ້ວຍລະບຽບສະຫວັດດີການສັງຄົມຕໍ່ພະນັກງານ ທຫລ ສະບັບເລກທີ 07/ທຫລ ລົງວັນທີ 07/01/2011 ວິທີຄິດໄລ່ດັ່ງນີ້:

- ອຸດໜູນໝ້າຍ .

<u>ຕົວຢ່າງ:</u> ທ່ານ ຄ ເສຍຊີວິດ, ເງິນເດືອນພື້ນຖານເດືອນສຸດທ້າຍຂອງຜູ້ກ່ຽວກ່ອນເສຍຊີວິດ = 1.518.000 ກີບ, ຈຳນວນປີການຈ່າຍເງິນເຂົ້າຄັງສະຫວັດດີການສັງຄົມ 15 ປີ.

**ເງິນອຸດໜູນໝ້າຍເທົ່າກັບ 1.518.000 ກີບ x 2% x 15 ປີ x 40% = 182.160 ກີບ.**

- ອຸດໜູນລູກກຳພ້າ .

ລູກທີ່ມີອາຍຸຕ່ຳກ່ວາ 18 ປີ ລົງມາ ( ຍົກເວັ້ນຜູ້ທີ່ແຕ່ງງານແລ້ວ ) ໃນກໍລະນີຍັງສືບຕໍ່ຮຽນໜັງສື ໂດຍມີການຢັ້ງຢືນຈາກໂຮງຮຽນກ່ຽວຂ້ອງ ແມ່ນໄດ້ຮັບອຸດໜູນຈົນກວ່າຜູ້ກ່ຽວ ຈະຄົບ 23 ປີ.

➔ ຄອບຄົວທີ່ໄດ້ຮັບເງິນອຸດໜູນເປັນໝ້າຍ: ລູກຜູ້ເສຍຊີວິດໄດ້ຮັບເງິນອຸດໜູນຕາມປົກກະຕິ (ເງິນເດືອນລູກ) ແລະຜູ້ລະ 20% ຂອງເງິນເດືອນພື້ນຖານເດືອນສຸດທ້າຍ ພໍ່ ຫຼື ແມ່;

<u>ຕົວຢ່າງ:</u> ທ່ານ ງ ເສຍຊີວິດ ຜູ້ກ່ຽວມີລູກ 2 ຄົນ, ເງິນເດືອນພື້ນຖານເດືອນສຸດທ້າຍ =1.518.000 ກີບ

**ເງິນອຸດໜູນກຳພ້າ = 20% x 1.518.000 ກີບ x 2 ຄົນ= 607.200 ກີບ**

➔ ຄອບຄົວທີ່ບໍ່ໄດ້ຮັບເງິນອຸດໜູນເປັນໝ້າຍ: ລູກຜູ້ເສຍຊີວິດໄດ້ຮັບເງິນອຸດໜູນຜູ້ລະ 30% ຂອງເງິນເດືອນພື້ນຖານເດືອນສຸດທ້າຍ ພໍ່ ຫຼື ແມ່.

<u>ຕົວຢ່າງ:</u> ທ່ານ ຈ ເສຍຊີວິດ ຜູ້ກ່ຽວມີລູກ 2 ຄົນ,ເງິນເດືອນພື້ນຖານເດືອນສຸດທ້າຍ =1.518.000 ກີບ

**ເງິນອຸດໜູນກຳພ້າ = 30% x 1.518.000 ກີບ x 2 ຄົນ= 910.800 ກີບ**

◆ **ສຳລັບເງິນອຸດໜູນລູກທັງໝົດ ບໍ່ໃຫ້ເກີນ 60% ຂອງເງິນເດືອນພື້ນຖານເດືອນສຸດທ້າຍ ພໍ່ ຫຼືແມ່.**

<u>ຕົວຢ່າງ:</u> ໃນກໍລະນີ ທ່ານ ສ ເສຍຊີວິດ ຜູ້ກ່ຽວມີລູກ 3 ຄົນ, ເງິນເດືອນພື້ນຖານເດືອນສຸດທ້າຍ = 1.518.000 ກີບ.

**ເງິນອຸດໜູນກຳພ້າ 1.518.000 ກີບ x 60% = 910.800 ກີບ**

ສ່ວນຜູ້ພິການແມ່ນໄດ້ຮັບເງິນອຸດໜູນຈົນກວ່າຜູ້ກ່ຽວມີວິຊາຊີບ. ສຳລັບຜູ້ທີ່ບໍ່ໄດ້ຮຽນໜັງສື ແລະ ບໍ່ໄດ້ຮັບເງິນອຸດໜູນນຳ ທຫລ ນັ້ນ ໄດ້ຮັບເງິນອຸດໜູນຄັ້ງດຽວ 40% ຂອງເງິນເດືອນພື້ນຖານເດືອນສຸດທ້າຍ ພໍ່ ຫຼື ແມ່.

- ອຸດໜູນເງິນລ້ຽງດູພໍ່ ແລະແມ່, ພໍ່ ຫຼື ແມ່ .

<u>ຕົວຢ່າງ:</u> ທ່ານ ຊ ເສຍຊີວິດ , ເງິນເດືອນພື້ນຖານເດືອນສຸດທ້າຍຂອງຜູ້ກ່ຽວເທົ່າກັບ 1.518.000 ກີບ, ຈຳນວນປີຈ່າຍເງິນເຂົ້າຄັງສະຫວັດດີການສັງຄົມ 10 ປີ.

ກໍລະນີມີແຕ່ພໍ່ ຫຼື ແມ່: ເງິນອຸດໜູນລ້ຽງດູ= 1.518.000 ກີບx2%x15 ປີx40%= 182.160 ກີບ

ກໍລະນີມີທັງ ພໍ່ ແລະ ແມ່: ເງິນອຸດໜູນລ້ຽງດູ= 1.518.000 ກີບx2%x15 ປີx60%= 273.240 ກີບ.